

2025

ບົດລາຍງານ ປະຈຳ 6 ເດືອນຕົ້ນປີ 2025

The Semi-Annual Report 2025

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ)

+856 30 9882809
ບ້ານໜອງຄົ້ນຄູ
ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ
ສປປ.ລາວ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ບົດລາຍງານ ປະຈຳປີ 6 ເດືອນຕົ້ນປີ 2025

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ)

ສາລະບານ

ພາກທີ 1	ຂໍ້ມູນທົ່ວໄປ	
	- ປະຫວັດຄວາມເປັນມາ	1
	- ວິໃສທັດ	3
	- ພາລະກິດ	3
	- ໂຄງຮ່າງການຈັດຕັ້ງ ແລະ ການບໍລິຫານ	4
	- ຈຳນວນພະນັກງານ	4
	- ສະຖານທີ່ຕັ້ງ	4
ພາກທີ 2	ລາຍງານຜົນການດຳເນີນງານ	
	- ລາຍງານ ລາຍຮັບ - ລາຍຈ່າຍ ປະຈຳມີຖຸນາ ປີ 2025	5
	- ລາຍງານ ຊັບສິນ ແລະ ສ່ວນຂອງຜູ້ຖືຫຸ້ນ ປະຈຳມີຖຸນາ ປີ 2025	7
ພາກທີ 3	ຂໍ້ມູນກ່ຽວກັບຊັບສິນ ແລະ ໂຄງສ້າງຜູ້ຖືຫຸ້ນ	
	- ຂໍ້ມູນກ່ຽວກັບຊັບສິນ	9
	- ໂຄງສ້າງຜູ້ຖືຫຸ້ນ	9
ພາກທີ 4	ສະພາບໍລິຫານ ແລະ ຄະນະກຳມະການ	
	- ໂຄງສ້າງຂອງສະມາຊິກບໍລິຫານ	11
	- ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ	11
ພາກທີ 5	ລາຍງານການກວດສອບຂອງບໍລິສັດກວດສອບພາຍນອກ (ພ້ອມເອກະສານຄັດຕິດ)	17
	- ບົດລາຍງານຂອງຜູ້ກວດສອບພາຍນອກ	
	- ໃບລາຍງານຖານະການເງິນ	
	- ໃບລາຍງານຜົນການດຳເນີນງານ	
	- ໃບລາຍງານສ່ວນປ່ຽນແປງຂອງທຶນ	
	- ໃບລາຍງານກະແສເງິນສົດ	
	- ບົດອະທິບາຍຊ້ອນທ້າຍລາຍງານການເງິນ	

ພາກທີ I ຂໍ້ມູນທົ່ວໄປກ່ຽວກັບບໍລິສັດ

ປະຫວັດຄວາມເປັນມາ : ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ສ້າງຕັ້ງຂຶ້ນໃນ ວັນທີ 29 ກໍລະກົດ 2008, ອີງຕາມໃບອະນຸຍາດລົງທຶນພາຍໃນ ສະບັບເລກທີ 077/ຄລທ.ນວ ໃນຮູບແບບບໍລິສັດ ຈຳກັດຜູ້ດຽວ ໂດຍມີນັກທຸລະກິດຄົນລາວຖືຮຸ້ນ 100 ສ່ວນຮ້ອຍ ດ້ວຍທຶນຈົດທະບຽນ 100,000 (ໜຶ່ງແສນ) ໂດ ລາສະຫະລັດ, ດຳເນີນທຸລະກິດໃຫ້ບໍລິການທີ່ປຶກສາດ້ານກະສິກຳແບບຄົບວົງຈອນຊຶ່ງຄອບຄຸມນັບຕັ້ງແຕ່ການສ້າງ ຟາມ, ການກ້າເບ້ຍ ແລະ ການປູກ.

ວັນທີ 04 ພຶດສະພາ 2012 ບໍລິສັດໄດ້ເພີ່ມທຶນຈົດທະບຽນມາເປັນ 5,000,000,000 (ຫ້າຕື້) ກີບ ໂດຍ ໄດ້ຮັບອະນຸຍາດດຳເນີນທຸລະກິດເພີ່ມເຕີມຄື: ປະເພດອຸດສະຫະກຳປຸງແຕ່ງຜະລິດນ້ຳມັນປາມຄົບວົງຈອນ ເປັນຕົ້ນ ແມ່ນການສ້າງໂຮງງານແປຮູບຜົນຜະລິດຈາກຕົ້ນປາມນ້ຳມັນ, ໂຮງງານຝຸ່ນຊີວະພາບ, ໂຮງງານຜະລິດນ້ຳມັນກະ ຊວນຊີວະພາບ, ໂຮງງານອັດຮ່າຍນ້ຳມັນພືດ ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0932/ຈທວ.
ວັນທີ 28 ສິງຫາ 2013 ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນມາເປັນ 40,000,000,000 (ສີ່ສິບຕື້) ກີບ ແລະ ຫັນປ່ຽນຮູບແບບບໍລິສັດຈາກບໍລິສັດຈຳກັດຜູ້ດຽວມາເປັນຮູບແບບບໍລິສັດຈຳກັດ, ເຊິ່ງໄດ້ຮັບອະນຸຍາດດຳເນີນທຸ ລະກິດເພີ່ມເຕີມຄື: ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍແນວພັນພືດ, ເບ້ຍໄມ້ກະສິກຳ ແລະ ຜົນຜະລິດກະສິກຳທຸກ ຊະນິດ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍສະບຽງອາຫານ ແລະ ເຄື່ອງດື່ມ, ນຳເຂົ້າວັດສະດຸກໍ່ສ້າງກຽວກັບການ ສ້າງຕັ້ງໂຮງງານອຸດສະຫະກຳ ແລະ ກະສິກຳ, ເຄື່ອງຈັກອື່ນໆທີ່ກ່ຽວຂ້ອງກັບ Biodiesel ເພື່ອຮັບໃຊ້ໂຮງງານ, ຝຸ່ນ ເຄມີ ແລະ ຫົວເຊື້ອເພື່ອນຳໃຊ້ເປັນສ່ວນປະກອບຜະລິດຝຸ່ນຊີວະພາບ. ໃນໄລຍະດັ່ງກ່າວ, ທຸລະກິດປາມເລີ່ມເປັນ ທີ່ຮັບຮູ້ ແລະ ມີການຕອບຮັບເປັນຢ່າງດີໃນໂຄງການປູກປາມຂອງບໍລິສັດທີ່ສົ່ງເສີມປະຊາຊົນຊຶ່ງມີເນື້ອທີ່ປູກສອນ ປາມກ່ວາ 120 (ໜຶ່ງຮ້ອຍຊາວ) ເຮັກຕ້າ ທີ່ບ້ານແອກຊ້າງ, ເມືອງໂພນໂຮງ, ແຂວງວຽງຈັນ.

ວັນທີ 12 ພະຈິກ 2014 ບໍລິສັດໄດ້ມີການປ່ຽນແປງສັດສ່ວນການຖືຮຸ້ນໃໝ່ ໂດຍທີ່ມີການຖືຄອງຮຸ້ນຈາກ ນັກທຸລະກິດລາວຄື: ທ່ານ ບຸນມາ ຈັນທະວົງ ຈຳນວນ 10 (ສິບ) ສ່ວນຮ້ອຍ, ທ່ານ ອຸດົມ ແກ້ວທະວົງ ຈຳນວນ 5 (ຫ້າ) ສ່ວນຮ້ອຍ ແລະ ນັກທຸລະກິດໄທ: ທ່ານ ເສດ ພັດທະນາມາດ ຈຳນວນ 85 (ແປດສິບຫ້າ) ສ່ວນຮ້ອຍ. ໃນ ໄລຍະນີ້ບໍລິສັດໄດ້ມີໂຄງການ 2+3 ປູກປາມນ້ຳມັນ ທີ່ເມືອງໄຊຍະບຸລີ ແລະ ໄດ້ພັດທະນາຕົ້ນປາມສາຍພັນທີ່ເໝ າະສົມກັບພື້ນທີ່ ສປປ ລາວ ເປັນຊຸດທີ່ສອງ.

ບໍລິສັດໄດ້ຫັນປ່ຽນຮູບແບບເປັນ ບໍລິສັດ ມະຫາຊົນ, ໂດຍບໍລິສັດໄດ້ຮັບການ ສ້າງຕັ້ງຂຶ້ນໃນວັນທີ 17 ພຶດສະພາ ປີ 2017 ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0424/ຈທວ ພາຍໃຕ້ກົດໝາຍ ຂອງ ສປປ ລາວ (ເຊິ່ງຕໍ່ໄປນີ້ ເອີ້ນວ່າ "ວັນທີປ່ຽນຮູບແບບບໍລິສັດ) ໂດຍມີ ສຳນັກງານໃຫຍ່ຕັ້ງຢູ່: ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ. ໃນວັນທີປ່ຽນຮູບແບບ ບໍລິສັດ ມີທຶນຈົດທະບຽນຢູ່ທີ່ 40,000,000,000 ກີບ (ສີ່ສິບຕື້) ກີບ ບໍລິສັດໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າສາມາດ ດຳເນີນທຸລະກິດໃນການນຳເຂົ້າຫົວເຊື້ອນ້ຳມັນເຊື້ອໄຟ ແລະ ບໍລິການຂາຍຍົກ-ຂາຍຍ່ອຍ ນ້ຳມັນເຊື້ອໄຟຊີວະພາບ ແລະ ໃຫ້ນຳເຂົ້ານ້ຳມັນກາຊວນເທົ່ານັ້ນເພື່ອມາຜະລິດເປັນ ນ້ຳມັນເຊື້ອໄຟຊີວະພາບ.

ເວົ້າລວມແລ້ວ, ບໍລິສັດລາວອາໂກຣເທັກແມ່ນບໍລິສັດທີ່ດຳເນີນທຸລະກິດທາງດ້ານອຸດສາຫະກຳການກະ ເສດແປຮູບແບບຄົບວົງຈອນ ໂດຍສຸມໃສ່ພືດທີ່ໃຫ້ນ້ຳມັນ ເຊິ່ງສາມາດແປຮູບໃຫ້ເປັນອາຫານ ແລະ ພະລັງງານໄດ້

ພືດນ້ຳມັນທີ່ບໍລິສັດໄດ້ພັດທະນາໃຫ້ເປັນທຸລະກິດຫຼັກໄດ້ແກ່: ນ້ຳມັນປາມ ທຸລະກິດກ່ຽວພັນກັບປາມນ້ຳມັນທີ່ ສາມາດສ້າງລາຍຮັບໃຫ້ກັບບໍລິສັດປະກອບມີ:

1. ທຸລະກິດຜະລິດ ແລະ ຈຳໜ່າຍເມັດພັນປາມ ແລະ ຕົ້ນກ້າປາມ.




2. ທຸລະກິດໃຫ້ການບໍລິການປູກ, ດູແລ, ແລະ ເປັນທີ່ປຶກສາໃນການບໍລິຫານຈັດການສວນປາມ.






3. ທຸລະກິດຜະລິດ ແລະ ຈຳໜ່າຍນ້ຳມັນປາມດິບ.




4. ທຸລະກິດຜະລິດ, ນຳເຂົ້າ ແລະ ຈຳໜ່າຍນ້ຳມັນກາຊວນຊີວະພາບ.





ວິໄສທັດ : ເປັນຜູ້ນຳດ້ານອຸດສາຫະກາປາມນ້ຳມັນຄົບວົງຈອນໃນ ສ ປປ ລາວ ເພື່ອ ຜະລິດເປັນພະລັງງານ ແລະ ອາຫານແບບຍືນຍົງ.



ພາລະກິດ :

1. ສະໜອງແນວພັນປາມນ້ຳມັນທີ່ດີ ມີຄຸນນະພາບ ໃຫ້ກັບກະເສດຕະກອນ.
2. ສົ່ງເສີມໃຫ້ປະຊາຊົນທີ່ມີສ່ວນຮ່ວມໃນການປູກປາມນ້ຳມັນເພື່ອໃຫ້ມີລາຍໄດ້ທີ່ໝັ້ນຄົງ.
3. ຜະລິດ ແລະ ສະໜອງນ້ຳມັນເຊື້ອໄຟຊີວະພາບທີ່ເປັນພະລັງທົດແທນ ໃຫ້ໄດ້ຄຸນນະພາບຕາມມາດຕະຖານເພື່ອສະໜອງໃຫ້ຜູ້ຊົມໃຊ້.
4. ຮັກສາຜົນປະໂຫຍດຕໍ່ຜູ້ຖືຮຸ້ນ ທີ່ມີສ່ວນໄດ້ສ່ວນເສຍ ໃຫ້ໄດ້ຮັບຜົນຕອບແທນສູງສຸດ.

ໂຄງຮ່າງການຈັດຕັ້ງ ແລະການບໍລິຫານ :



ຈຳນວນຄົນ : ຂອງ ລອທ ທັງໝົດ 48 ຄົນ, ໃນນີ້ຍິງ 12 ຄົນ

ສຳນັກງານໃຫຍ່ສອນໝອງຄັນຄູ	ຈຳນວນ	35	ຄົນ
ສອນແກ້ວອຸດົມ	ຈຳນວນ	7	ຄົນ
ສອນຊະນະຄາມ	ຈຳນວນ	2	ຄົນ
ສອນສາລະວັນ	ຈຳນວນ	2	ຄົນ
ສອນແອັກຊ້າງ	ຈຳນວນ	2	ຄົນ

ສະຖານທີ່ຕັ້ງສຳນັກງານແລະໂຮງງານ: ບ້ານໝອງຄັນຄູ ເມືອງນາຊາຍທອງ ແຂວງນະຄອນຫຼວງວຽງຈັນ, ສປປ ລາວ ໂທລະສັບ 030-988-2809

ພາກທີ II ລາຍງານຜົນການດຳເນີນທຸລະກິດ ປະຈຳມິຖຸນາ ປີ 2025

ສຳລັບເຄິ່ງທຳອິດຂອງປີ 2025, ບໍລິສັດມີບົດລາຍງານທາງດ້ານການເງິນດັ່ງຕໍ່ໄປນີ້:

ລາຍງານ ລາຍຮັບ - ລາຍຈ່າຍ 6 ເດືອນຕົ້ນ ປະຈຳ ປີ 2025


ໜ່ວຍ : ລ້ານກີບ

ລາຍການ	ມິຖຸນາ_2025	ມິຖຸນາ_2024	ຈຳນວນເພີ່ມ (ຫລຸດ)	ອັດຕາສ່ວນ ເພີ່ມ (ຫລຸດ)
ລາຍຮັບຈາກການຂາຍ ແລະການບໍລິການ	17,761	20,370	(2,609)	(13)
ຕົ້ນທຶນຂອງການຂາຍ	(16,789)	(16,834)	(45)	(0)
ກຳໄລລວມ	**972**	**3,536**	**(2,564)**	**(73)**
ຄ່າໃຊ້ຈ່າຍໃນການຂາຍແລະບໍລິຫານ	(6,018)	(6,679)	(660)	(10)
ລາຍໄດ້ອື່ນໆ	1,069	1,214	(145)	(12)
ໄດ້ຮັບ/(ຂາດທຶນ) ຈາກອັດຕາແລກປ່ຽນ	(832)	(925)	(92)	(10)
ກຳໄລ/(ຂາດທຶນ) ຈາກການດຳເນີນງານ	**(4,810)**	**(2,853)**	**(1,957)**	**(69)**
ລາຍຈ່າຍທາງດ້ານການເງິນ	(128)	(103)	25	24
ກຳໄລ/(ຂາດທຶນ) ກ່ອນພາສີລາຍໄດ້	**(4,938)**	**(2,956)**	**(1,982)**	**(67)**
ອາກອນກຳໄລ				
ກຳໄລ/(ຂາດທຶນ) ສຸດທິສຳລັບງວດ	**(4,938)**	**(2,956)**	**(1,982)**	**(67)**




ໃນ 6 ເດືອນຕົ້ນປີ ລາຍຮັບຈາກການຂາຍ ແລະ ການບໍລິການຂອງບໍລິສັດໃນປີ 2025 ມີ 17,761 ລ້ານກີບ ແລະ ໃນປີ 2024 ຢູ່ທີ່ 20,370 ລ້ານກີບ, ຫຼຸດລົງ 2,690 ລ້ານກີບ ຈາກປີກ່ອນ ກວມເອົາ 13 ສ່ວນຮ້ອຍ. ຄ່າໃຊ້ຈ່າຍໃນການຂາຍ ແລະ ບໍລິຫານຂອງບໍລິສັດໃນປີ 2025 ແມ່ນ 16,789 ລ້ານກີບ ແລະ ໃນປີ 2024 ແມ່ນ 16,834 ລ້ານກີບ, ຫຼຸດລົງ 45 ລ້ານກີບ ຈາກປີກ່ອນ. ດັ່ງນັ້ນ, ໃນ 6 ເດືອນຕົ້ນປີ 2025, ກຳໄລລວມຂອງບໍລິສັດໄດ້ຫຼຸດລົງຈາກປີຜ່ານມາ 2,564 ລ້ານກີບ, ກວມເອົາ 73 ສ່ວນຮ້ອຍ.

ກຳໄລ(ຂາດທຶນ)ຈາກການດຳເນີນງານ(ລ້ານກີບ)



ໃນ 6 ເດືອນຕົ້ນປີ, ບໍລິສັດມີລາຍຈ່າຍດຳເນີນງານ ແລະ ບໍລິຫານໃນປີ 2025 ຈຳນວນ 6,018 ລ້ານ ກີບ ແລະ ໃນປີ 2024 ຈຳນວນ 6,679 ລ້ານກີບ, ຫຼຸດລົງ 660 ລ້ານກີບ ຫຼື 10% ຈາກປີກ່ອນ. ບໍລິສັດມີລາຍ ຮັບອື່ນໆໃນປີ 2025 ຈຳນວນ 1,069 ລ້ານກີບ ແລະ ໃນປີ 2024 ຈຳນວນ 1,124 ລ້ານກີບ, ຫຼຸດລົງ 145 ລ້ານກີບ ຫຼື 12% ຈາກປີກ່ອນ. ບໍລິສັດມີການສູນເສຍເງິນຕາຕ່າງປະເທດໃນປີ 2025 ຈຳນວນ 832 ລ້ານກີບ ແລະ ໃນປີ 2024 ຈຳນວນ 925 ລ້ານກີບ, ຫຼຸດລົງ 92 ລ້ານກີບ ຫຼື 10% ຈາກປີກ່ອນ. ດັ່ງນັ້ນ, ກຳໄລ ແລະ ຂາດທຶນຂອງ ບໍລິສັດໃນປີ 2025 ຫຼຸດລົງ 1,957 ລ້ານກີບ ຫຼື 69% ຈາກປີກ່ອນ.

ກຳໄລ/(ຂາດທຶນ) ສຸດທິສຳລັບງວດ(ລ້ານກີບ)



ໃນ 6 ເດືອນຕົ້ນປີ, ຄ່າໃຊ້ຈ່າຍທາງດ້ານການເງິນຂອງບໍລິສັດໃນປີ 2025 ມີ 128 ລ້ານກີບ ແລະ ໃນ ປີ 2024 ເປັນ 103 ລ້ານກີບ, ເພີ່ມຂຶ້ນ 25 ລ້ານກີບ ຫຼື 24% ເມື່ອທຽບໃສ່ປີກ່ອນ. ບໍລິສັດບໍ່ໄດ້ເສຍພາສີລາຍໄດ້ ຂອງບໍລິສັດໃນທັງສອງປີ, ເຮັດໃຫ້ກຳໄລແລະການສູນເສຍສຸດທິຂອງບໍລິສັດໃນປີ 2025 ຫຼຸດລົງຈາກປີທີ່ຜ່ານມາ 1,982 ລ້ານກີບ ຫຼື 67 ສ່ວນຮ້ອຍ.

ຊັບສິນ ແລະ ສ່ວນຂອງຜູ້ຖືຫຸ້ນ

ໜ່ວຍ : ລ້ານກີບ

ລາຍການ	ມິຖຸນາ_2025	ມິຖຸນາ_2024	ຈຳນວນເພີ່ມ (ຫລຸດ)	ອັດຕາສ່ວນເພີ່ມ (ຫລຸດ)
ລວມຊັບສິນໝຸນວຽນ	20,506	20,047	459	2
ລວມຊັບສິນບໍ່ໝຸນວຽນ	60,920	54,642	6,279	11
ລວມຊັບສິນ	**81,426**	**74,688**	**6,738**	**9**
ລວມໜີ້ສິນໝຸນວຽນ	25,282	13,607	11,676	86
ລວມໜີ້ສິນໝຸນວຽນ	18,223	18,223	0	0
ລວມໜີ້ສິນ	**43,506**	**31,830**	**11,676**	**37**
ທຶນຈດທະບຽນ	50,000	50,000	0	0
ສ່ວນເພີ່ມທຶນ	3,269	3,269	0	0
ຄ້ຽສະສົມຕາມກົດລະບຽບ	**932**	**932**	**0**	**0**
ກຳໄລລໍຖ້າແບ່ງປັນ	(16,281)	(11,343)	(4,938)	44
ລວມສ່ວນຂອງຜູ່ຖືຫຸ້ນ	**37,920**	**42,858**	**(4,938)**	**(12)**
ລວມໜີ້ສິນແລະສ່ວນຂອງຜູ່ຫຸ້ນ	**81,426**	**74,688**	**6,738**	**9**



ໃນ 6 ເດືອນຕົ້ນປີ, ບໍລິສັດມີຊັບສິນທັ້ງໝົດໃນປີ 2025 ຈຳນວນ 20,506 ລ້ານກີບ ແລະ ໃນປີ 2024 ຈຳນວນ 20,047 ລ້ານກີບ, ເພີ່ມຂຶ້ນ 459 ລ້ານກີບ ຫຼື 2% ຈາກປີກ່ອນ. ໃນປີ 2025 ບໍລິສັດມີຊັບສິນທັ້ງໝົດ 60,920 ລ້ານກີບ ແລະ ໃນປີ 2024 ຈຳນວນ 54,642 ລ້ານກີບ, ເພີ່ມຂຶ້ນ 6,279 ລ້ານກີບ ຫຼື 11% ຈາກປີກ່ອນ. ດັ່ງນັ້ນ, ຊັບສິນທັ້ງໝົດຂອງບໍລິສັດໃນປີ 2025 ເພີ່ມຂຶ້ນ 6,738 ລ້ານກີບ ຫຼື 9% ຈາກປີກ່ອນ



ໃນ 6 ເດືອນຕົ້ນປີ, ບໍລິສັດມີໜີ້ສິນທັງໝົດໃນປີ 2025 ຈຳນວນ 25,282 ລ້ານກີບ ແລະ ໃນປີ 2024 ຈຳນວນ 13,607 ລ້ານກີບ, ເຊິ່ງເພີ່ມຂຶ້ນຈາກປີຜ່ານມາ 11,676 ລ້ານກີບ, ກວມເອົາ 86 ເປີເຊັນ. ບໍລິສັດມີໜີ້ສິນບໍ່ປະຈຸບັນໃນປີ 2025 ຈຳນວນ 18,223 ລ້ານກີບ, ເທົ່າກັບປີ 2024. ດັ່ງນັ້ນ, ໜີ້ສິນທັງໝົດຂອງບໍລິສັດໃນປີ 2025 ເພີ່ມຂຶ້ນຈາກປີ 2025 ຈຳນວນ 11,676 ລ້ານກີບ, ກວມເອົາ 37 ເປີເຊັນ.



ໃນ 6 ເດືອນຕົ້ນປີ, ບໍລິສັດໄດ້ສະສົມສະຫງວນຕາມກົດໝາຍຈຳນວນ 932 ລ້ານກີບ ໃນປີ 2025 ແລະ 2024 ເຊິ່ງ ບໍລິສັດມີຄັງສຳຮອງທາງກົດໝາຍທີ່ສະສົມເທົ່າກັບປີກ່ອນ. ບໍລິສັດມີລາຍຮັບສະສົມທີ່ລໍຖ້າແບ່ງປັນໃນຈຳນວນ 16,281 ລ້ານກີບ ໃນປີ 2025 ແລະ 11,343 ລ້ານກີບ ໃນປີ 2024 ເຊິ່ງເພີ່ມຂຶ້ນຈາກປີຜ່ານມາ 4,938 ລ້ານກີບ ກວມເອົາ 44 ສ່ວນຮ້ອຍ. ດັ່ງນັ້ນ, ບໍລິສັດຈຶ່ງມີສ່ວນຂອງຮຸ້ນຜູ້ຖືຮຸ້ນຫຼຸດລົງຈາກປີຜ່ານມາ ຈຳນວນ 4,938 ລ້ານກີບ, ກວມເອົາ 12 ສ່ວນຮ້ອຍ.

ພາກທີ III ຂໍ້ມູນກ່ຽວກັບຊັບສິນ ແລະ ໂຄງສ້າງຜູ້ຖືຫຸ້ນ

ຂໍ້ມູນກ່ຽວກັບຊັບສິນ :

ທຶນຈົດທະບຽນທັງໝົດ	50,000,000,000	ກີບ
ຈຳນວນຫຸ້ນທັງໝົດ	100,000,000	ຫຸ້ນ
ຈຳນວນຮຸ້ນທີ່ບໍ່ຝາກກັບ ຕລຊລ	80,000,000	ຫຸ້ນ
ຈຳນວນຮຸ້ນທີ່ຝາກກັບ ຕລຊລ	20,000,000	ຫຸ້ນ




ໂຄງສ້າງຂອງຜູ້ຖືຫຸ້ນ:

ຜູ້ຖືຫຸ້ນທີ່ມີການຖືຄອງຫຸ້ນຕັ້ງແຕ່ 5% ຂຶ້ນໄປ:

1. ບໍລິສັດ ໂອພີຈີ ອິນເຕີເນຊັນແນລ ຈຳກັດ ຖືຄອງຈຳນວນຫຸ້ນ 60,000,000 ຫຸ້ນ ມີສັດສ່ວນຖືຄອງຄິດເປັນ 60% ຂອງຫຸ້ນ ລອທ
2. ທ່ານ ສົມນຶກ ມະນີໂຊດ ຖືຄອງຈຳນວນຫຸ້ນ 12,000,000 ຫຸ້ນ ມີສັດສ່ວນຖືຄອງຄິດເປັນ 12% ຂອງຫຸ້ນ ລອທ
3. ທ່ານ ທະນະເສດ ມາລາວັນໂນ ຖືຄອງຈຳນວນຫຸ້ນ 7,800,000 ຫຸ້ນ ມີສັດສ່ວນຖືຄອງຄິດເປັນ 8% ຂອງຫຸ້ນ ລອທ

ໂຄງສ້າງຜູ້ຖືຫຸ້ນ


ທ່ານ ສົມບຶກ ມະນີໄຊ, 12,000,000 , 12%
ທ່ານ ທະນະເສດ ມາລາວັນ ໂນ, 7,800,000 , 8%
ທ່ານ ເສດ ຜັດທະນະມາດ, 199,995 , 0%
ນາງໄມຍາງ ບົວລາວັນ, 1 , 0%
ນາງ ອາລິສາ ແກ້ວທະວົງ, 1 , 0%
ນາງ ເລົາຄຳ ດວງບັນດາ, 1 , 0%
ນາງ ເຄີຕຳ ດວງບັນດາ, 1 , 0%
ນາງ ຂັນໃຈ ສີວິໄລ, 1 , 0%
ອື່ນໆ, 20,000,000 , 20%
ບໍລິສັດ ໄອດີ ອິນເຕີເນຊັ່ນ ແນລ ຈຳກັດ, 60,000,000 , 60%

ພາກທີ IV ສະພາບໍລິຫານ ແລະ ຄະນະກຳມະການ

ໂຄງສ້າງຂອງສະພາບໍລິຫານ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະກອບໄປດ້ວຍສະມາຊິກສະພາ ບໍລິຫານ ຈຳນວນ 3 ທ່ານ ແລະ ສະມາຊິກສະພາບໍລິຫານອິດສະຫຼະ ຈຳນວນ 3 ທ່ານ, ຊຶ່ງມີປະຫວັດຫຍໍ້ ແລະ ຕຳແໜ່ງການບໍລິຫານດັ່ງຕໍ່ໄປນີ້:

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ອະພິສິດ ຣຸຈິກຸດກຳຈອນ
ວັນ ເດືອນ ປີເກີດ	: 20 ກັນຍາ 1945
ສັນຊາດ	: ໄທ
ພາສາ	: ໄທ/ອັງກິດ
ຕຳແໜ່ງ	: ປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)

ປະຫວັດການສຶກສາ :

ປີ 1969	: ປະລິນຍາຕຣີ, ສາຂາວິສະວະກຳໂຍທາ, ມະຫາວິທະຍາໄລ ຂອນແກ່ນ, ປະເທດໄທ
ປີ 1975	: ມະລິນຍາໂທ, ສາຂາວິສະວະກຳໂຍທາ, ມະຫາວິທະຍາໄລ ລາມາ, ປະເທດສະຫະລັດອາເມລິກາ

ປະຫວັດການເຮັດວຽກ :

ປີ 2008 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ສະຫຍາມໂກລ ບ້ອນເຮົ້າ ຈຳກັດ (ມະຫາຊົນ), ປະເທດໄທ
ປີ 2011 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ຊີອອຍ ຈຳກັດ (ມະຫາຊົນ) , ປະເທດໄທ
ປີ 2014 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ເອເຊັຍໄບໂອແມດ ຈຳກັດ, ປະເທດໄທ
ປີ 2014 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ເອເຊັຍກາຣີນ ເອເນີຈີ ຈຳກັດ (ມະຫາຊົນ) , ປະເທດໄທ
ປີ 2008 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ດີ ທີ ຊີ ເອັນເທີໄພຣສ໌, ປະເທດໄທ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ນາງ ຄຳແພງ ພັດທະດາວົງ
ວັນ ເດືອນ ປີເກີດ	: 27 ກັນຍາ 1979
ສັນຊາດ	: ລາວ
ພາສາ	: ລາວ/ອັງກິດ
ຕຳແໜ່ງ	: ຮອງປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)

ປະຫວັດການສຶກສາ :

ປີ 2002	: ປະລິນຍາຕີ, ສາຂາບໍລິຫານທຸລະກິດ
ປີ 2010	: ປະລິນຍາໂທ, ສາຂາບໍລິຫານທຸລະກິດ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
ປີ 2019	: ປະລິນຍາເອກ, ສາຂາພັດທະນາອົງກອນ ແລະ ສາມັດທະນະມະນຸດ, ວິທະຍາໄລບູລະພາ, ປະເທດໄທ

ປະຫວັດການເຮັດວຽກ :

ປີ 1998 – 2001	: ເລຂານຸການ, ບໍລິສັດ ລາວໂຕໂຍຕ້າ
ປີ 2001 – 2005	: ຕົວແທນຂອງ ສປປ ລາວ, ASEAN E-Learning network
ປີ 2007 – 2013	: ຜູ້ປະສານງານໂຄງການ, ສະຖາບັນການເມືອງ ແລະ ການປົກຄອງ
ປີ 2013 – 2016	: ເປັນທີ່ປຶກສາ, TMC- Lao Hydraulic Machinery Manufacturing
ປີ 2010 - ປະຈຸບັນ	: ຮອງປະທານ ກຸ່ມການສຶກສາ ແສງສະຫວັນ
ປີ 2010 - ປະຈຸບັນ	: ຜູ້ປະເມີນອິດສະຫຼະ Education Qualify Insurance, ກະຊວງສຶກສາທິການ ແລະ ກິລາ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ເສດ ພັດທະນະມາດ
ວັນ ເດືອນ ປີເກີດ	: 16 ພຶດສະພາ 1973
ສັນຊາດ	: ໄທ
ພາສາ	: ໄທ/ລາວ
ຕຳແໜ່ງ	: ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່

ປະຫວັດການສຶກສາ :

ປີ 1991-1993	: ປະກາສະນີຍາບັດວິຊາຊີບຊັ້ນສູງ, ສາຂາອີເລັກໂຕນິກ, ວິທະຍາໄລເທັກນິກປະທຸມທານີ, ປະເທດໄທ
ປີ 1993-1995	: ສາຂາໄຟຟ້າສື່ສານ, ສະຖາບັນເທັກໂນໂລຢີປະທຸມວັນ, ປະເທດໄທ.
ປີ 2011-2013	: ບໍລິຫານທຸລະກິດມະຫາບັນທິດ (ບໍລິຫານທຸລະກິດສາລັບຜູ້ບໍລິຫານ) ວິທະຍາໄລພານິດຍະສາດ ມະຫາວິທະຍາໄລບູລະພາ ສາຂາໄຟຟ້າສື່ສານ,ປະເທດໄທ.
ປີ 2017-2019	: ປັດຊະຍາດຸດສະດີບັນດິດ (ການພັດທະນາອົງກອນ ແລະ ການຈັດການສະມັດທະນະຂອງມະນຸດ), ມະຫາວິທະຍາໄລບູລະພາ, ປະເທດໄທ.

ປະຫວັດການເຮັດວຽກ:

ປີ 1995 – 2002	: ອາຈານປະຈຳພາກວິຊາອີເລັກໂຕນິກ ສາຂາ ອີເລັກໂຕນິກ ອຸດສາຫະກຳ, ວິທະຍາໄລເຕັກນິກການຈະນະບຸລີ, ປະເທດໄທ
ປີ 2003 – 2004	: ກຳມະການ ແລະ ຜູ້ຈັດການທົ່ວໄປ, ບໍລິສັດ ໂບຣແລມ ເທັກໂນໂລຢີ ຈຳກັດ, ປະເທດໄທ
ປີ 2005 – 2006	: ກຳມະການ ແລະ ຜູ້ຈັດການທົ່ວໄປ, ບໍລິສັດ ຊິແມດ ຄໍປໍເລຊັ່ນ, ຈຳກັດ ປະເທດໄທ
ປີ 2006 - ປະຈຸບັນ	: ກຳມະການຜູ້ຈັດການ, ບໍລິສັດ ອອຍປາມກຸບ ຈຳກັດ, ປະເທດໄທ
ປີ 2008 - ປະຈຸບັນ	: ກຳມະການຜູ້ຈັດການ, ບໍລິສັດ ໂອພີຈີເທັກ ຈຳກັດ, ປະເທດໄທ
ປີ 2009 - ປະຈຸບັນ	: ຜູ້ອຳນວຍການໃຫຍ່, ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ທະນະເສດ ມາລະວັນໂນ
ວັນ ເດືອນ ປີເກີດ	: 05 ສິງຫາ 1977
ສັນຊາດ	: ໄທ
ພາສາ	: ໄທ / ລາວ
ຕຳແໜ່ງ	: ສະມາຊິກສະພາບໍລິຫານ
ປີ 2010 - ປະຈຸບັນ	:

ປະຫວັດການສຶກສາ/ Education :

ປີ 1999	: ປະລິນຍາຕີ ວິສະວະກອນ ສາຂາ ວິສະວະກອນ ລະບົບຄວບຄຸມ ສະຖາບັນເທັກໂນໂລຢີພະຈອມເກົ້າເຈົ້າ ຄຸນທະຫານລາດກະບັງ

ປະຫວັດການເຮັດວຽກ

ປີ 2000 - ປະຈຸບັນ	: ປະກອບທຸລະກິດສ່ວນໂຕ, ອະສັງຫາລິມະຊັບ, ຮ້ານອາຫານ ແລະ ຮັບເໝົາກໍ່ສ້າງ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ນາງ ດວງສະໄໝ ເລົ່າຟຸ໋ງ
ວັນ ເດືອນ ປີເກີດ	: 14 ກໍລະກົດ 1960
ສັນຊາດ	: ລາວ
ພາສາ	: ລາວ/ອັງກິດ/ຣັດເຊຍ
ຕຳແໜ່ງ	: ສະມາຊິກສະພາບໍລິຫານ (ສະມາຊິກອິດສະຫຼະ)

ປະຫວັດການສຶກສາ:

ປີ 1983	: ປະລິນຍາຕີ, ສາຂາວາງແຜນເສດຖະກິດແຫ່ງຊາດ, ອະດີດສະຫະພາບໂຊວຽດ
ປີ 1984	: ປະລິຍາໂທ, ສາຂາວາງແຜນເສດຖະກິດແຫ່ງຊາດ, ອະດີດສະຫະພາບໂຊວຽດ

ປະຫວັດການເຮັດວຽກ:

ປີ 1984 – 1992	: ພະນັກງານວິຊາການ, ກະຊວງເສດຖະກິດ ແລະ ການເງິນ
ປີ 1992 – 2009	: ພະນັກງານວິຊາການ, ທະນາຄານການຄ້າຕ່າງປະເທດລາວ
ປີ 2009 – 2014	: ຮອງຜູ້ຈັດການສາຂາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ປີ 2014 – 2015	: ຮອງຜູ້ຈັດການພະແນກບັນຊີ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ



ຊື່ - ນາມສະກຸນ	: ທ່ານ ພິງຖານ ພິດຈຳນົງ
ວັນ ເດືອນ ປີເກີດ	: 19 ມັງກອນ 1973
ສັນຊາດ	: ໄທ
ພາສາ	: ໄທ/ລາວ
ຕຳແໜ່ງ	: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1993	: ຊັ້ນສູງ, ສາຂາວິສາວະກຳໄຟຟ້າ, ສະຖາບັນ ຊ່າງປະທຸມວັນ, ປະເທດໄທ
ປີ 1995	: ປະລິນຍາຕຣີ, ສາຂາໄຟຟ້າສື່ສານ, ສະຖາບັນຊ່າງປະທຸມ ວັນ, ປະເທດໄທ
ປີ 2011	: ບໍລິຫານທຸລະກິດສາລັບຜູ້ບໍລິຫານ, ສະຖາບັນນິດ້າ

ປະຫວັດການເຮັດວຽກ / Experience :

ປີ 1996 – 1998	: ວິສະວະກອນ, Telecom Asia PLC.
ປີ 1998 – 2003	: ຜູ້ຈັດການ, Zemasch corp., Ltd.
ປີ 2004 – 2013	: ຜູ້ຈັດການຝ່າຍບໍລິຫານ, Borland technology Ltd.
ປີ 2014 - ປະຈຸບັນ	: ສະມາຊິກສະພາບໍລິຫານ, ບໍລິສັດ ໂອພີຈິເທັກ ຈຳກັດ, ປະເທດໄທ
ປີ 2022 - ປະຈຸບັນ	: ຜູ້ອານວຍການ, ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ປະທານສະພາບໍລິຫານ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອະພິສິດ ຣຸຈິກຽດກຳຈອນ

pwc

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ

ເອກະສານລາຍງານການເງິນສັງລວມກິດຈະການ (ທົບທວນຄືນ)

ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2025

ສາລະບານ	ໜ້າ
ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນສັງລວມກິດຈະການ	1
ໃບລາຍງານຖານະການເງິນສັງລວມກິດຈະການ	2
ໃບລາຍງານຜົນໄດ້ຮັບສັງລວມກິດຈະການ	3
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ	4
ໃບລາຍງານກະແສເງິນສົດສັງລວມກິດຈະການ	5 - 6
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການ ໂດຍຫຍໍ້	7 – 15

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນສັງລວມກິດຈະການ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພວກຂ້ອພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນການເງິນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ, ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນສັງລວມກິດຈະການ ສິ້ນສຸດວັນທີ 30 ມິຖຸນາ 2025 ແລະ ໃບລາຍງານຜົນໄດ້ຮັບສັງລວມກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ ແລະ ໃບລາຍງານກະແສເງິນສົດສັງລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີດຽວກັນ, ແລະ ບົດອະທິບາຍຊຸ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການ ໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີ່ຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ເອກະສານລາຍງານການເງິນສັງລວມກິດຈະການເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານ ລາຍງານການເງິນກາງປີ ຂອງບໍລິສັດ. ຄວາມຮັບຜິດຊອບ ຂອງພວກເຮົາຄື ການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນສັງລວມກິດຈະການດັ່ງກ່າວ ບົນພື້ນຖານການທົບທວນຄືນ ຂອງພວກເຮົາ.

ຂອບເຂດ ການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບ ມາດຕະຖານ ການທົບທວນຄືນ ແບບສາກົນ 2410 "ການທົບທວນຄືນເອກະສານລາຍງານການເງິນ ໂດຍຜູ້ກວດສອບ ອິດສະຫຼະ", ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິເຄາະຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ, ເພາະການກວດສອບ ແມ່ນໄດ້ປະຕິບັດຕາມ ມາດຕະຖານການກວດສອບ ສາກົນ. ເພາະສະນັ້ນ, ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກເຮົາໄດ້, ດັ່ງນັ້ນ ພວກເຮົາບໍ່ສະແດງຄວາມເຫັນຢືນຢັນຕໍ່ການກວດສອບ.

ສະຫລຸບ

ບົນພື້ນຖານການທົບທວນຄືນ ຂອງພວກເຮົາ ແມ່ນບໍ່ມີຫຍັງທີ່ເປັນສາລະສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນສັງລວມກິດຈະການດັ່ງກ່າວບໍ່ໄດ້ສະໜອງຂໍ້ມູນທີ່ຖືກຕ້ອງ ໃນລັກສະນະຕາມຫຼັກການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນສັງລວມກິດຈະການນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີ ສ (ລາວ) ຈຳກັດຜູ້ດຽວ.

ໂດຍ: ທ່ານ ພົງພັນ ດຳຣົງພັນອຸດົມ
ຮຸ້ນສວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 26 ສິງຫາ 2025

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານຖານະການເງິນສ້ຽລວມກິດຈະການ
ສິ້ນສຸດ ວັນທີ 30 ມີຖຸນາ 2025

	ບິດ ອະທິບາຍ	ທີ່ຍຫວນສິ້ນ 30 ມີຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	423,782,899	3,556,622,752
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	5	7,312,714,885	7,745,187,515
ເຄື່ອງໃນສາງ, ສຸດທິ	6	428,905,846	210,538,164
ວັດສະດຸລະໜອງໂຮງງານ, ສຸດທິ	7	4,672,450,766	1,321,893,384
ຄ່າເບື້ອນຊ່ຳລະລ່ວງໜ້າ ແລະ ຄ່າໃຊ້ຈ່າຍປະມານເພື່ອຂາຍ	8	1,004,676,611	799,422,815
ຊັບສິນໝຸນວຽນອື່ນໆ		6,663,471,609	6,413,200,610
ລວມຊັບສິນໝຸນວຽນ		**20,506,002,616**	**20,046,865,240**
ຊັບສິນບໍ່ໝຸນວຽນ			
ຊັບສິນຄົງຖ້ຽ ມີຕົວຕົນ, ສຸດທິ	9	20,170,363,253	19,820,758,071
ຄ່າເບື້ອນລ່ຳຖ້ຽລ່ວງໜ້າ ແລະ ຄ່າໃຊ້ຈ່າຍປຸກຕົ້ນໄມ້, ສຸດທິ	10	22,546,548,485	22,802,068,802
ຄ່າເບື້ອນລ່ຳຖ້ຽລ່ວງໜ້າ ແລະ ຄ່າໃຊ້ຈ່າຍປຸກ ຕົ້ນຢາງ	11	15,233,204,164	9,158,137,050
ຄ່າເບື້ອນລ່ຳຖ້ຽລ່ວງໜ້າ ແລະ ຄ່າໃຊ້ຈ່າຍປຸກ ຕົ້ນກາແຟ ແລະ ຕົ້ນມະພ້ຶນ	12	2,970,026,192	2,860,608,812
ລວມຊັບສິນບໍ່ໝຸນວຽນ		**60,920,142,094**	**54,641,572,735**
ລວມຊັບສິນ		**81,426,144,710**	**74,688,437,975**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສ່ຽງການຄ້າ ແລະ ໜີ້ຕ້ອງສ່ຽອື່ນໆ	13	22,145,688,295	10,710,564,109
ໜີ້ສິນໝຸນວຽນອື່ນໆ	14	256,887,574	55,847,258
ເງິນກ້ຶຍືມໄລຍະສັ້ນ	15	2,000,000,000	2,000,000,000
ໜີ້ຕ້ອງສ່ຽຈາກການເຊ່ົາຊ້ຶໝຸນວຽນ	16	879,793,125	840,316,500
ລວມໜີ້ສິນໝຸນວຽນ		**25,282,368,994**	**13,606,727,867**
ໜີ້ສິນບໍ່ໝຸນວຽນ			
ໜີ້ສິນບໍ່ໝຸນວຽນອື່ນໆ		18,223,424,449	18,223,424,449
ລວມໜີ້ສິນບໍ່ໝຸນວຽນ		**18,223,424,449**	**18,223,424,449**
ລວມໜີ້ສິນ		**43,505,793,443**	**31,830,152,316**
ທຶນເຈົ້າຂອງ			
ທຶນຈົດທະບຽນ		50,000,000,000	50,000,000,000
ສ່ວນເພີ່ມທຶນ		3,269,466,406	3,269,466,406
ກ້ຽສະສົມຜົນລະບຽບການ		932,158,245	932,158,245
ຂາດທຶນ ສະສົມຈ່ຳເລ່ງປັ້ນ		(16,281,273,384)	(11,343,338,992)
ລວມທຶນເຈົ້າຂອງ		**37,920,351,267**	**42,858,285,659**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**81,426,144,710**	**74,688,437,975**

ທ່ານ ສົງຖານ ພິດຈ່ຳນົງ
ຮອງຜູ້ອ່ຳນວຍການ
ວັນທີ: 26 ສິງຫາ 2025

ທ່ານ ວັນສະເຫຼີມ ສີສຸດ່ຳນົງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບົດອະທິບາຍຂ້ອນທ້າຍ ແຕ່ໜ້າທີ 7 – 15 ແມ່ນເປັນພາກສ່ວນໜຶ່ງຂອງ ແລະ ສາມາດອ່ານລາຍງານການເງິນສ້ຽລວມກິດຈະການ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານຜົນໄດ້ຮັບສ້ຽລວມກິດຈະການ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

	ບົດອະທິບາຍ	ທົບທວນຄືນ 30 ມິຖຸນາ 2025 ກີບ	ທົບທວນຄືນ 30 ມິຖຸນາ 2024 ກີບ
ລາຍຮັບຈາກການຂາຍ		17,761,206,234	20,370,170,954
ຕົ້ນທຶນໃນການຂາຍ		(16,789,210,819)	(16,834,112,978)
ກຳໄລລວມ		**971,995,415**	**3,536,057,976**
ລາຍຈ່າຍການຂາຍ ແລະ ບໍລິຫານ		(6,018,431,422)	(6,678,663,062)
ລາຍຮັບອື່ນໆ		1,069,091,888	1,214,287,061
ຂາດທຶນຈາກອັດຕາແລກປ່ຽນ		(832,457,559)	(924,550,498)
ຂາດທຶນຈາກການດຳເນີນງານ		**(4,809,801,678)**	**(2,852,868,523)**
ລາຍຈ່າຍທາງການເງິນ		(128,132,714)	(103,139,794)
ຂາດທຶນກ່ອນຕັກອາກອນກຳໄລ		**(4,937,934,392)**	**(2,956,008,317)**
ອາກອນກຳໄລ	17	(-)	(-)
ຂາດທຶນສຸດທິສຳລັບງວດ		**(4,937,934,392)**	**(2,956,008,317)**
ຂາດທຶນຕໍ່ຮຸ້ນ			
ຂາດທຶນສ້ຽນຖານຕໍ່ຮຸ້ນ	18	(49.38)	(29.56)

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 26 ສິງຫາ 2025

ທ່ານ ວັນສະເຫຼີມ ສີສຸດຳມັ້ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 15 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນສ້ຽລວມກິດຈະການ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

	ທຶນຈົດທະບຽນ ກີບ	ສ່ວນເພີ່ມທຶນ ກີບ	ກຳໄລ/(ຂາດທຶນສະສົມ) ຍັງສະສົມຕາມ ລະບຽບການ ກີບ	ກຳໄລ/(ຂາດທຶນສະສົມ) ຍັງບໍ່ທັນແບ່ງປັນ ກີບ	ລວມ ກີບ
ຍອດຍົກມາ					
ໃນວັນທີ 1 ມັງກອນ 2025 - ກວດສອບ	50,000,000,000	3,269,466,406	932,158,245	(11,343,338,992)	42,858,285,659
ຂາດທຶນໃນງວດ	(-)	(-)	(-)	(4,937,934,392)	(4,937,934,392)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2025 - ທີ່ທົບທວນຄືນ	**50,000,000,000**	**3,269,466,406**	**932,158,245**	**(16,281,273,384)**	**37,920,351,267**
ຍອດຍົກມາ					
ໃນວັນທີ 1 ມັງກອນ 2024 - ກວດສອບ	50,000,000,000	3,269,466,406	932,158,245	(9,587,013,508)	44,614,611,143
ຂາດທຶນໃນງວດ	(-)	(-)	(-)	(2,956,008,317)	(2,956,008,317)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2024 - ທີ່ທົບທວນຄືນ	**50,000,000,000**	**3,269,466,406**	**932,158,245**	**(12,543,021,825)**	**41,658,602,826**

ທ່ານ ພົງຖານ ພິດຈໍານົງ
ຮອງຜູ້ອຳນວຍການ
ວັນທີ: 26 ສິງຫາ 2025

ທ່ານ ວັນສະເຫຼີມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 – 15 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນສັງລວມກິດຈະການ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານກະແສເງິນສົດສ້ຽລວມກິດຈະການ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

	ບົດ ອະທິບາຍ	ທົ່ວທວນຄົນ 30 ມິຖຸນາ 2025 ກີບ	ທົ່ວທວນຄົນ 30 ມິຖຸນາ 2024 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ຂາດທຶນກ່ອນຫັກອາກອນກຳໄລ		**(4,937,934,392)**	**(2,956,008,317)**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽມ	9	1,030,934,400	1,144,372,054
ຄ່າຕັດຖອນ	10	481,044,711	464,860,249
ກຳໄລຈາການສະສ້ຽຫຸ້ນສ່ວນບັດຄົ້ງທີ ມິຕິຄົນ	9	(60,000,000)	(-)
ການສູນເສຍມູນຄ່າເຍືອນຊ່ຳລະຕົ້ນທຶນການປູກເປ້ຍ ປາມ	8	32,919,448	36,298,242
ການສູນເສຍມູນຄ່າເຍືອນຊ່ຳລະຕົ້ນທຶນການປູກ ຕົ້ນຢີ້ນ້ຳ	11	262,258,453	(-)
ຂາດທຶນ/(ກຳໄລ)ຈາກອັດຕາແລກປ່ຽນ		832,958,642	(496,728,420)
ລາຍຈ່າຍອັດຕາດອກເບ້ຍ		128,132,714	103,139,794
ຄ່າສູນເສຍມູນຄ່າໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(-)	480,996,000
ເກັບຄືນຄ່າສູນເສຍມູນຄ່າໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	5	(202,102,451)	(-)
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		634,575,081	753,027,878
ເຄື່ອງໃນສາງ, ສຸດທິ		(218,367,682)	(52,324,589)
ວັດສະດຸສະໜອງ, ສຸດທິ		(3,350,557,382)	(1,630,834,720)
ເຍືອນຊ່ຳຖ້ຽຕົ້ນທຶນການປູກຕົ້ນປາມ-ເມັ່ຍປາມເພື່ອຂາຍ		(238,173,244)	39,340,512
ຮັບສິນໝຸນວຽນອື່ນໆ		(250,270,999)	(2,789,248,285)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		5,545,629,379	2,691,902,362
ໜີ້ສິນໝຸນວຽນອື່ນໆ		204,346,565	40,079,955
ເງິນສົດໃຊ້ໃນກິດຈະກຳການດຳເນີນງານ		**(104,606,757)**	**(2,171,127,285)**
ດອກເບ້ຍຈ່າຍ		(128,132,714)	(103,139,794)
ເງິນສົດສຸດທິ ໃຊ້ໃນກິດຈະກຳການດຳເນີນງານ		**(232,739,471)**	**(2,274,267,079)**

ທ່ານ ພົ້ງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 26 ສິງຫາ 2025

ທ່ານ ວັນສະໂຫມ ສີສຸດຳມັ້ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 26 ສິງຫາ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 15 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນສ້ຽລວມກິດຈະການ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານກະແສເງິນສົດສ້ຽງລວມກິດຈະການ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

	ປີດ ອະທິບາຍ	ທົບທວນຄົນ 30 ມິຖຸນາ 2025 ກີບ	ທົບທວນຄົນ 30 ມິຖຸນາ 2024 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່ ມີຕົວຕົນ	9	(1,266,212,826)	(2,628,032,667)
ຈ່າຍຄ່າຕົ້ນທຶນການຢຸກຕົ້ນຢາມ	10	(225,524,394)	(168,470,695)
ເຍື່ອນລ໋ຳຕັດຕົ້ນທຶນການຢຸກ - ຕົ້ນຢືນ້ຳ	11	(1,364,433,089)	(2,243,912,275)
ຮັບຈາກການສະສາງຊັບສິນບັດຄົງທີ່ ມີຕົວຕົນ	9	60,000,000	(-)
ຄ່າເຍື່ອນລ໋ຳຕັດຕົ້ນທຶນການຢຸກ ຕົ້ນກະຖິນນາລົງ	12	(109,417,380)	(1,462,394,142)
ເງິນສົດໃຊ້ສຸດທ້ີໃຊ້ໃນ ໃນກິດຈະກຳການລົງທຶນ		**(2,905,587,689)**	**(6,502,809,779)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມໄລຍະສັ້ນ	15	2,000,000,000	2,000,000,000
ຈ່າຍເງິນຄືນຈາກການກູ້ຢືມ ໄລຍະສັ້ນ	15	(2,000,000,000)	(2,000,000,000)
ຈ່າຍເງິນຕົ້ນຄືນຈາກການເຊົ່າຊື້		(-)	(240,379,107)
ເງິນສົດສຸດທ້ີໃຊ້ໃນ ກິດຈະກຳການເງິນ		**(-)**	**(240,379,107)**
ຫຼຸດລົງສຸດທ້ີ ໃນເງິນສົດ ແລະ ລາຍການທຽບເທົ່າ ເງິນສົດ		**(3,138,327,160)**	**(9,017,455,965)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ	4	3,556,622,752	14,386,401,761
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າ ເງິນສົດ		5,487,307	1,377,459,789
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ	4	**423,782,899**	**6,746,405,585**
ລາຍການສຳຄັນທ້ີບ່ແມ່ນເງິນສົດ:			
ການໄດ້ມາຂອງຊັບສິນບັດຄົງທີ່ ມີຕົວຕົນທ້ີຍັງບ່ໄດ້ຊຳລະ	9	312,770,000	1,808,277,273
ການໄດ້ມາຂອງຕົ້ນຢືນ້ຳ ທ້ີຍັງບ່ໄດ້ຊຳລະ	11	4,774,449,234	(-)

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທ: 26 ສິງຫາ 2025

ທ່ານ ວັນສະໜ້ຳ ສີສຸຄຳພັງ
ຫົວໜ້າພັນທ - ການເງິນ
ວັນທ: 26 ສິງຫາ 2025

ປີດອະທິບາຍຊ້ອນທ້າຍ ແຕ່ໜ້າທ 7 - 15 ແມ່ນເປັນສ່ວນໜ້ຶ່ງຂອງເອກະສານລາຍງານການເງິນສ້ຽລວມກິດຈະການ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການໂດຍຫຍໍ້ (ທົບທວນຄືນ)
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025

1 ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແລະ ບໍລິສັດໃນເຄືອເຊິ່ງແມ່ນບໍລິສັດ ລາວດີ ກຣີນ ຈຳກັດຜູ້ດຽວ (ລວມກັນເປັນກຸ່ມບໍລິສັດ) ແມ່ນບໍລິສັດ ຈົດທະບຽນ ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ມີ ສຳນັກງານຈົດທະບຽນຕັ້ງຢູ່ ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກຸ່ມບໍລິສັດໄດ້ມີການຈ ໍ ໜ່າຍຮຸ້ນສາມັນຢູ່ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດໃນ ວັນທີ 25 ກັນຍາ 2017.

ກິດຈະກຳຫຼັກຂອງກຸ່ມບໍລິສັດ ແມ່ນ ອຸດສາຫະກຳນ ້ ຳມັນປາມ ເຊິ່ງລວມຈາກການເພາະປູກເມັດຕົ້ນປາມ, ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ. ບໍລິສັດຍັງສະໜອງເມັດຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຕົ້ນ ໝາກປາມ.

ນອກຈາກນີ້, ກຸ່ມບໍລິສັດ ຍັງໄດ້ນ ำ ເຂ ົ ້ າ ສິນຄ ້ າ ສ ຳ ເລັດຮູບ ເຊັ່ນ: ນ ้ ຳ ມັນປຸງແຕ ່ ງອາຫານ ແລະ ແປ ້ ງ ມ ັ ນ ຈ າ ກ ປ ະ ເ ທ ດ ໄ ທ ເ ພ ື ່ ອ ຈ ຳ ໜ ່ າ ຍ ໃ ນ ສ ປ ປ ລ າ ວ .

ເດືອນ ກັນຍາ ປີ 2023, ກຸ່ມບໍລິສັດ ໄດ້ມີການລົງທຶນໃນ ບໍລິສັດ ລາວດີ ກຣີນ ຈຳກັດຜູ້ດຽວ ໃນອັດສ ່ ວນ 100%, ເ ຊ ິ ່ ງ ມ ູ ນ ຄ ່ ຳ ການລົງທຶນແມ ່ ນ 240,422,000,000 ກີບ (ຈ ຳ ນ ວ ນ 100,000 ຮຸ ້ ນ, ລ າ ຄ າ ຕ ໍ ່ ຮ ຸ ້ ນ ແ ມ ່ ນ 2,404,220 ກ ີ ບ), ສ ຳ ລ ັ ບ ໄ ລ ຍ ະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2025, ກຸ ່ ມ ບ ໍ ລ ິ ສ ັ ດ ໄ ດ ້ ຈ ່ າ ຍ ເ ງ ິ ນ ລ ົ ງ ທ ຶ ນ ເ ພ ີ ່ ມ ມ ູ ນ ຄ ່ ຳ 3,051,210,549 ກ ີ ບ (2024: 10,944,555,481 ກ ີ ບ). ນ ະ ຈ ັ ບ ທ ີ 30 ມ ິ ຖ ຸ ນ າ 2025, ກ ຸ ່ ມ ບ ໍ ລ ິ ສ ັ ດ ໄ ດ ້ ຖ ອ ກ ເ ງ ິ ນ ລ ົ ງ ທ ຶ ນ ໃ ນ ບ ໍ ລ ິ ສ ັ ດ ໃ ນ ເ ຄ ື ອ ແ ລ ້ ວ ຈ ຳ ນ ວ ນ 13,995,766,030 ກ ີ ບ (ໃ ນ ນ ັ ້ ນ ຖ ອ ກ ເ ປ ັ ນ ຮ ຸ ້ ນ ສ ິ ນ ມ ູ ນ ຄ ່ ຳ 6,282,156,612 ກ ີ ບ ແ ລ ະ ຖ ອ ກ ເ ປ ັ ນ ເ ງ ິ ນ ສ ົ ດ ມ ູ ນ ຄ ່ ຳ 7,713,609,418 ກ ີ ບ).

ກິດຈະກຳຫຼັກຂອງບໍລິສັດໃນເຄືອ ແມ ่ ນ ການປ ູ ກ ຕ ົ ້ ນ ໄ ມ ້ ກ ະ ຖ ິ ນ ເ ທ ິ ງ ໃ ຫ ້ ມ ີ ຄ ຸ ນ ນ ະ ພ າ ບ ແ ລ ະ ມ ີ ຄ ວ າ ມ ຍ ືນ ຍ ົ ງ ເ ພ ື ່ ອ ເ ປ ັ ນ ຜ ະ ລ ິ ດ ຕ ະ ພ ັ ນ ພ ້ ອ ມ ສ ້ າ ງ ມ ູ ນ ຄ ່ າ ສ ູ ງ ສ ຸ ດ ໃ ນ ການສ ົ ່ ງ ອ ອ ກ ສ ູ ່ ຕ ະ ຫ ຼ າ ດ ພ າ ຍ ນ ອ ກ .

ບໍລິສັດມີໂຄງການໃນການດ ำ ເ ນ ີ ນ ທ ຸ ລ ະ ກ ິ ດ ຕ ັ ້ ງ ຢ ູ ່ ເ ມ ື ອ ງ ຕ ະ ໂ ອ ຍ ແ ລ ະ ສ ະ ໜ ້ ວ ຍ , ແ ຂ ວ ງ ສ າ ລ ະ ວ ັ ນ , ສ ປ ປ ລ າ ວ .

ເອກະສານລາຍງານການເງິນສະບັບນີ້ໄດ ້ ຮ ັ ບ ການຮ ັ ບ ຮ ອ ງ ຈ າ ກ ຜ ູ ້ ອ ຳ ນ ວ ຍ ການໃ ນ ວ ັ ນ ທ ີ 26 ສ ິ ງ ຫ າ 2025.

2 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນສັງລວມກິດຈະການ ການ ປ ີ ໄ ດ ້ ຖ ກ ສ ້ າ ງ ຂ ຶ ້ ນ ໂ ດ ຍ ອ ີ ງ ຕ າ ມ ນ ະ ໂ ຍ ບ າ ຍ ການບ ັ ນ ຊ ີ ຂ ອ ງ ກ ຸ ່ ມ ບ ໍ ລ ິ ສ ັ ດ ດ ັ ່ ງ ທ ີ ່ ໄ ດ ້ ອ ະ ທ ິ ບ າ ຍ ໄ ວ ້ ໃ ນ ລ າ ຍ ລ ະ ອ ຽ ດ ເ ພ ີ ່ ມ ເ ຕ ີ ມ ໃ ນ ເ ອ ກ ະ ສ ານ ລ າ ຍ ງ ານ ການ ເ ງ ິ ນ ສ ັ ງ ລ ວ ມ ກ ິ ດ ຈ ະ ການ ປ ະ ຈ ຳ ປ ີ ສ ຳ ລ ັ ບ ປ ີ ສ ິ ້ ນ ສ ຸ ດ ວ ັ ນ ທ ີ 31 ທ ັ ນ ວ າ 2024. ເ ອ ກ ະ ສ ານ ລ າ ຍ ງ ານ ການ ເ ງ ິ ນ ຫ ຼ ັ ກ ເ ຊ ັ ່ ນ : ໃ ບ ລ າ ຍ ງ ານ ຖ ານ ະ ການ ເ ງ ິ ນ ສ ັ ງ ລ ວ ມ ກ ິ ດ ຈ ະ ການ, ໃ ບ ລ າ ຍ ງ ານ ຜ ົ ນ ໄ ດ ້ ຮ ັ ບ ສ ັ ງ ລ ວ ມ ກ ິ ດ ຈ ະ ການ, ໃ ບ ລ າ ຍ ງ ານ ສ ່ ວ ນ ປ ່ ຽ ນ ແ ປ ງ ທ ຶ ນ ຂ ອ ງ ຕ ົ ນ ເ ອ ງ ສ ັ ງ ລ ວ ມ ກ ິ ດ ຈ ະ ການ ແ ລ ະ ໃ ບ ລ າ ຍ ງ ານ ກ ະ ແ ສ ເ ງ ິ ນ ສ ົ ດ ສ ັ ງ ລ ວ ມ ກ ິ ດ ຈ ະ ການ ຖ ື ກ ນ ຳ ສ ະ ເ ໜ ີ ໃ ນ ຮ ູ ບ ແ ບ ບ ທ ີ ່ ສ ອ ດ ຄ ່ ອ ງ ກ ັ ບ ເ ອ ກ ະ ສ ານ ລ າ ຍ ງ ານ ການ ເ ງ ິ ນ ປ ະ ຈ ຳ ປ ີ ໂ ດ ຍ ປ ະ ຕ ິ ບ ັ ດ ຕ າ ມ ລ ະ ບ ຽ ບ ການ ລ າ ຍ ງ ານ ແ ລ ະ ການ ເ ປ ີ ດ ເ ຜ ີ ຍ ທ ີ ່ ອ ອ ກ ໂ ດ ຍ ສ ຳ ນ ັ ກ ງ ານ ຄ ະ ນ ະ ກ ຳ ມ ະ ການ ຄ ຸ ້ ມ ຄ ອ ງ ຫ ຼ ັ ກ ຊ ັ ບ .

ເ ອ ກ ະ ສ ານ ລ າ ຍ ງ ານ ການ ເ ງ ິ ນ ສ ັ ງ ລ ວ ມ ກ ິ ດ ຈ ະ ການ 6 ເ ດ ື ອ ນ ຕ ົ ້ ນ ປ ີ ສ ະ ບ ັ ບ ນ ີ ້ ຄ ວ ນ ອ ່ ານ ຄ ู ่ ກ ັ ບ ເ ອ ກ ະ ສ ານ ລ າ ຍ ງ ານ ການ ເ ງ ິ ນ ສ ັ ງ ລ ວ ມ ກ ິ ດ ຈ ະ ການ ປ ະ ຈ ຳ ປ ີ ສ ຳ ລ ັ ບ ປ ີ ສ ິ ້ ນ ສ ຸ ດ ວ ັ ນ ທ ີ 31 ທ ັ ນ ວ າ 2024.

2 ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

ຂໍ້ສົມມຸດຖານການດຳເນີນງານຕໍ່ເນື່ອງ

ນະວັນທີ 30 ມິຖຸນາ 2025, ໜີ້ສິນໝຸນວຽນ ຂອງກຸ່ມບໍລິສັດແມ່ນເກີນຊັບສິນໝຸນວຽນມູນຄ່າ 4,776,366,378 ກີບ. ກຸ່ມບໍລິສັດຍັງໄດ້ລາຍງານຜົນການດຳເນີນງານຂາດທຶນສຸດທິ ສຳລັບປີສິ້ນສຸດວັນທີ 31 ທັນວາ 2023 ແລະ 2024, ເຊັ່ນດຽວກັບໄລຍະຫົກເດືອນຕົ້ນປີສິ້ນສຸດໃນວັນທີ 30 ມິຖຸນາ 2025. ເງື່ອນໄຂເຫຼົ່ານີ້ຊີ້ໃຫ້ເຫັນຄວາມສ່ຽງດ້ານສະພາບຄ່ອງ.

ຢ່າງໃດກໍ່ຕາມ, ກຸ່ມບໍລິສັດໄດ້ຮັບຈົດໝາຍຢືນຢັນຢ່າງເປັນທາງການຈາກເຈົ້າໜີ້ການຄ້າທີ່ລະບຸວ່າ ຈະບໍ່ຮຽກຮ້ອງການຊຳລະຄືນໜີ້ສິນທັງໝົດ 13,310,838,234 ກີບ ພາຍໃນ 12 ເດືອນຕໍ່ໜ້ານັບແຕ່ວັນທີ 30 ມິຖຸນາ 2025 ເປັນຕົ້ນໄປ. ນອກຈາກນັ້ນ, ຜູ້ຖືຮຸ້ນລາຍໃຫຍ່ຍັງໄດ້ຢັ້ງຢືນວ່າ ຈະໃຫ້ການຊ່ວຍເຫຼືອດ້ານການເງິນທີ່ໝັ້ນຄົງ ແລະ ເໝາະສົມ ເພື່ອໃຫ້ກຸ່ມບໍລິສັດສາມາດຈ່າຍໜີ້ສິນຕ່າງໆ ຕາມກຳນົດ ແລະ ດຳເນີນທຸລະກິດຕາມປົກກະຕິ. ນອກຈາກນັ້ນ, ກຸ່ມບໍລິສັດຍັງໄດ້ປັບປຸງແຜນການດຳເນີນທຸລະກິດ ໂດຍໄດ້ປັບປຸງຍຸດທະສາດ ແລະ ແຜນການດຳເນີນທຸລະກິດ ໃຫ້ສອດຄ່ອງກັບສະພາບຕະຫຼາດ ແລະ ສະພາບເສດຖະກິດ ໃນປັດຈຸບັນ ແລະ ໃນອະນາຄົດ ເພື່ອໃຫ້ສາມາດສ້າງລາຍຮັບ ແລະ ກະແສເງິນສົດຈາກການດຳເນີນງານ ໄດ້ຢ່າງຍືນຍົງ ແລະ ມີປະສິດທິຜົນ.

ກຸ່ມບໍລິສັດມີສ່ວນຢຸ້ນແຍ່ງທຶນເຈົ້າຂອງສະແດງເປັນຂາດທຶນ ຈຳນວນ 30 ມິຖຸນາ 2025. ຜູ້ບໍລິຫານເຊື່ອວ່າ, ອີງໃສ່ການສະໜັບສະໜຸນທາງດ້ານການເງິນຈາກຜູ້ຖືຮຸ້ນ ແລະ ແຜນທຸລະກິດສະບັບປັບປຸງ ການຈັດທຳເອກະສານລາຍງານການເງິນນີ້ ພື້ນຖານສົມມຸດຖານການດຳເນີນງານຕໍ່ເນື່ອງຈຶ່ງເຫັນວ່າເໝາະສົມສຳລັບການເອກະສານລາຍງານການເງິນສະບັບນີ້.

3. ການຄາດຄະເນ

ການສ້າງເອກະສານລາຍງານການເງິນສັງລວມກິດຈະການທົບທວນຄືນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ, ການຄາດຄະເນ ແລະ ການສົມມຸດຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຈຳນວນຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການສ້າງເອກະສານລາຍງານການເງິນສັງລວມກິດຈະການທົບທວນຄືນ, ຜູ້ບໍລິຫານຕ້ອງມີການຕັດສິນໃຈທີ່ສຳຄັນ ໃນການນຳໃຊ້ນະໂຍບາຍການບັນຊີຂອງກຸ່ມບໍລິສັດ ແລະ ແຫຼ່ງທີ່ມາອັນສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ ສຳລັບການສ້າງເອກະສານລາຍງານການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024.

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ເງິນສົດໃນມື	51,821,965	5,248,000
ເງິນຝາກໃນທະນາຄານທີ່ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການ(i)	371,960,934	3,551,374,752
	423,782,899	**3,556,622,752**

(i) ເງິນຝາກໃນທະນາຄານ ລວມມີສາມສະກຸນເງິນ ແມ່ນມີ ສະກຸນ ໂດລາ, ກີບ ແລະ ບາດ ໃນນັ້ນຊີເງິນຝາກສະແລງລັບກັບທະນາຄານພາຍໃນປະເທດ ແລະ ທະນາຄານສາຂາຕ່າງປະເທດ.

5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ໜີ້ຕ້ອງຮັບການຄ້າ[i]	8,655,182,285	9,289,757,366
ໜີ້ຕ້ອງຮັບອື່ນໆ	339,600,000	339,600,000
ຫັກ: ຄ່າສູນເສຍມູນຄ່າ[ii]	(1,682,067,400)	(1,884,169,851)
	7,312,714,885	**7,745,187,515**

(i) ໜີ້ຕ້ອງຮັບການຄ້າປະກອບມີໜີ້ຕ້ອງຮັບຈາກເມັດຕົ້ນຢາມ, ນ້ຳມັນກາຊອນ ແລະ ການຂາຍນ້ຳມັນປາມຕິບພາຍໃນ.

(ii) ລາຍການເຄື່ອນໄຫວສຳລັບໜີ້ສົງໄສຈະເສຍແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2025 - ກວດສອບ	1,884,169,851
ເພີ່ມຂຶ້ນ	-
ເກັບຄືນໜີ້ສົງໄສຈະເສຍ[iii]	(202,102,451)
ຍອດເຫຼືອທ້າຍງວດ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**1,682,067,400**

(iii) ກຸ່ມບໍລິສັດສຳເລັດການເກັບຄືນຈຳນວນເງິນທີ່ເຄີຍຕັ້ງເປັນໜີ້ສົງໄສຈະເສຍກ່ອນໜ້ານັ້ນ, ສິ່ງຜົນໃຫ້ມີການໜັກລ້າງຄືນໜີ້ສົງໄສຈະເສຍ.

6. ເຄື່ອງໃນສາງ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ສິນຄ້າສຳເລັດຮູບ[i]	275,955,419	155,623,245
ຜະລິດຕະພັນລວມປຸງແຕ່ງ	152,950,427	54,914,919
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້ຳ	(-)	(-)
	428,905,846	**210,538,164**

(i) ສິນຄ້າສຳເລັດຮູບສ່ວນໃຫຍ່ປະກອບມີ: ຜະລິດຕະພັນເສດເຫຼືອ, ເມັດປາມທີ່ໃຊ້ໃນການແປຮູບເປັນນ້ຳມັນປາມດິບ ແລະ ນ້ຳມັນເຊື້ອເຟີງຊີ້ວະພາບ. ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ກຸ່ມບໍລິສັດບໍ່ມີການສະສາງສິນຄ້າໃນສາງ.

7. ວັດສະດຸສະໜອງໂຮງງານ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ປຸ໋ຍສຳລັບການປູກຕົ້ນປາມ	265,173,274	520,696,279
ນ້ຳມັນປາມດິບ (CPO)	3,505,622,101	474,693,590
ນ້ຳມັນກາຊວນ	335,956	100,955,542
ອຸປະກອນໂຮງງານອື່ນໆ(1)	901,319,435	225,547,973
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າວັດສະໄໜ ແລະ ເຄື່ອນໄຫວຊ້ຳ	(-)	(-)
	4,672,450,766	**1,321,893,384**

(1) ວັດສະດຸສະໜອງໂຮງງານອື່ນໆຫຼັກໆປະກອບມີ: ຂີ້ເຈຍ, ເຄມີ ແລະ ເມັດປາມສຳລັບປູກເບ້ຍຕົ້ນປາມ. ໄລຍະ 6 ເດືອນ ຕົ້ນ ປີ ສິ້ນສຸດວັນທີ 30 ມິຖຸນາ 2025, ກຸ່ມບໍລິສັດບໍ່ມີການສະສາງວັດສະດຸສະໜອງໂຮງງານ.

8. ຄ່າເຍື່ອນຊ້ຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ

ເຍື່ອນຊ້ຳລະຕົ້ນທຶນການປູກເບ້ຍປາມ ຕົ້ນທຶນແມ່ນປະກອບມີທັງ ລາຄາຊື້ເມັດປາມ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບ້ຍຕົ້ນ ປາມ ເຊັ່ນ: ຄ່າແຮງງານໃນການປູກ ແລະ ຄ່າປຸ໋ຍ.

ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ກຸ່ມບໍລິສັດໄດ້ສະສາງເຍື່ອນຊ້ຳລະຕົ້ນທຶນການປູກເບ້ຍປາມທີ່ຕາຍອອກມູນ ຄ່າ 32,919,448 ກີບ ແລະ ໄດ້ຮັບຮູ້ຄ່າດັ່ງກ່າວເຂົ້າໃນໃບລາຍງານຜົນໄດ້ຮັບ.

ລາຍການເຄື່ອນໄຫວສຳລັບເຍື່ອນຊ້ຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ ແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2025 - ກວດສອບ	799,422,815
ເພີ່ມຂຶ້ນ	238,173,244
ສະສາງອອກ	(32,919,448)
ຍອດເຫຼືອທ້າຍງວດ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**1,004,676,611**

9 ອຸປະສິນຄົງທີ່ ມີຕົວຕົນ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2025 - ກວດສອບ	**19,820,758,071**
ເພີ່ມຂຶ້ນ	1,578,982,826
ໂອນໄປຄ່າເຍື່ອນລໍ້ຖ້າຕັດຕົ້ນທຶນການປູກ ຕົ້ນຢີ້ຳ	(198,443,244)
ຄ່າຫຼຸ້ຍຫ້ຽນ	(1,030,934,400)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**20,170,363,253**
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025	
ຕົ້ນທຶນ	41,065,872,533
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	(20,895,509,280)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**20,170,363,253**

ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ກຸ່ມບໍລິສັດໄດ້ສະສາງຍານພາຫະນະຂອງກະໃຫ້ລູກຄ້າ, ພາຫະນະດັ່ງກ່າວໄດ້ຖືກຫັກຄ່າຫຼຸ້ຍຫ້ຽນໝົດແລ້ວ, ບໍ່ມີມູນຄ່າສຸດທິເຫຼືອໃນຂະນະສະສາງ. ກຸ່ມບໍລິສັດໄດ້ຮັບຮູ້ກຳໄລໃນການສະສາງເປັນມູນຄ່າ 60,000,000 ກີບ, ເຊິ່ງຖືກສະແດງໃນໃບລາຍງານຜົນໄດ້ຮັບ.

10 ຄ່າເຍື່ອນລໍ້ຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2025 - ກວດສອບ	**22,802,068,802**
ເພີ່ມຂຶ້ນ	225,524,394
ຫັກ: ຄ່າຕັດຮອນ	(481,044,711)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**22,546,548,485**
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025	
ຕົ້ນທຶນເຍື່ອນລໍ້ຖ້າຕັດຕົ້ນທຶນການປູກຕົ້ນປາມ	29,679,414,603
ຫັກ: ຄ່າຕັດຮອນສະສົມ	(7,132,866,118)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**22,546,548,485**

ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ມີຕົ້ນທຶນການປູກເຍື່ອນໄດ້ຕັດຮອນ ມູນຄ່າ 481,044,711 ກີບ (2024: 464,860,249) ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ.

11 ຄ່າເຍື່ອນລໍ່ຄ່າຕັດຕົ້ນທຶນການປູກ ຕົ້ນຢີ້ນ້ຳ

ຕົ້ນທຶນການປູກ ຕົ້ນຢີ້ນ້ຳລວມມີ ຕົ້ນທຶນຊື້ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນຢີ້ນ້ຳ ເຊັ່ນ: ຄ່າແຮງງານ ແລະ ຄ່າປຸ໋ຍ.

ລາຍການເຄື່ອນໄຫວສຳລັບຄ່າເຍື່ອນລໍ່ຄ່າຕັດຕົ້ນທຶນການປູກ ຕົ້ນຢີ້ນ້ຳ ແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ຕົ້ນ ໃນວັນທີ 1 ມັງກອນ 2025 - ກວດສອບ	**9,158,137,050**
ເພີ່ມຂຶ້ນ	6,138,882,323
ໂອນມາຈາກຊັບສິນບັດຖ້ຳທີ່ ມີຕົວຕົນ	198,443,244
ການສູນເສຍມູນຄ່າ	(262,258,453)
ຍອດເຫຼືອທ້າຍງວດ ສຸດທ້ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**15,233,204,164**

12 ຄ່າເຍື່ອນລໍ່ຄ່າຕັດຕົ້ນທຶນການປູກ ຕົ້ນກະຖ໋ນບາລິງ

ຄ່າເຍື່ອນລໍ່ຄ່າຕັດຕົ້ນທຶນການປູກ ຕົ້ນກະຖ໋ນບາລິງ ລວມມີຄ່າປຸກເປີກທີ່ດິນ ຄ່າແຮງງານ, ຄ່າປຸ໋ຍ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນກະຖ໋ນບາລິງ.

ລາຍການເຄື່ອນໄຫວຂອງຄ່າເຍື່ອນລໍ່ຄ່າຕັດຕົ້ນທຶນການປູກ ຕົ້ນກະຖ໋ນບາລິງ ໄດ້ສະຫຼຸບດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ສຸດທ້ ໃນວັນທີ 1 ມັງກອນ 2025 - ກວດສອບ	**2,860,608,812**
ເພີ່ມຂຶ້ນ	109,417,380
ຍອດເຫຼືອທ້າຍງວດ ສຸດທ້ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**2,970,026,192**

13 ໜີ້ຕ້ອງຮັ່ງການຄ້າ ແລະ ໜີ້ຕ້ອງຮັ່ງອື່ນໆ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ໜີ້ຕ້ອງຮັ່ງການຄ້າ[i]	20,265,331,653	9,398,887,632
ໜີ້ຕ້ອງຮັ່ງອື່ນໆ[ii]	1,880,356,642	1,311,676,477
	22,145,688,295	**10,710,564,109**

13 ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ (ຕໍ່)

(i) ໜີ້ຕ້ອງການຄ້າຮັບສ່ວນໃຫຍ່ປະກອບມີ ຄ່ານ້ຳມັນປາມຄົບ, ນ້ຳມັນພືດ, ເມັດປາມ ແລະ ຕົ້ນຢີ້ຳຈາກຕ່າງປະເທດໃນສຳລັບໄລຍະ 6 ເດືອນຕົ້ນປີ.

(ii) ໜີ້ຕ້ອງຮັບອື່ນໆ ສ່ວນໃຫຍ່ປະກອບມີ ຄ່າທີ່ປຶກສາຊ່ຽວຊານ, ເງິນເດືອນຄ້າງຈ່າຍ ແລະ ຄ່າເຄື່ອງໜັບໜາປາມ.

14 ໜີ້ສິນໝຸນວຽນອື່ນໆ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ເງິນເດືອນຄ້າງຈ່າຍ	61,953,574	55,847,258
ເງິນຮັບລ່ວງໜ້າຈາກລູກຄ້າ[i]	194,934,000	(-)
	256,887,574	**55,847,258**

(i) ກຸ່ມບໍລິສັດໄດ້ຮັບເງິນລ່ວງໜ້າຈາກລູກຄ້າເພື່ອມັດຈຳໃນການຊື້ຜະລິດຕະພັນເສດເຫຼືອບຳກຸ່ມບໍລິສັດ. ມູນຄ່າດັ່ງກ່າວໄດ້ບັນທຶກເປັນໜີ້ສິນໝຸນວຽນອື່ນໆ ແລະ ຈະສະສາງເມື່ອສິນຄ້ານັ້ນໆກ່າວໄດ້ຖືກສົ່ງມອບໃຫ້ລູກຄ້າ.

15 ເງິນກູ້ຢືມໄລຍະສັ້ນ

	ກີບ
ຍອດຍົກມາ ຕົ້ນປີ ໃນວັນທີ 1 ມັງກອນ 2025 - ກວດສອບ	**2,000,000,000**
ເພີ່ມຂຶ້ນ	2,000,000,000
ຊຳລະຄືນ	(2,000,000,000)
ຍອດເຫຼືອທ້າຍງວດ ສຸດທ້າ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**2,000,000,000**

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025, ກຸ່ມບໍລິສັດໄດ້ຖອນເງິນກູ້ໄລຍະສັ້ນເພີ່ມເຕີມຈາກທະນາຄານໄຊ້ຍ-ຮ່າໂມ້ຍ ລາວ ຈຳກັດ ມູນຄ່າ 2,000,000,000 ກີບ ແລະ ໄດ້ມີການຊຳລະເງິນຕົ້ນຄືນໃຫ້ແກ່ທະນາຄານມູນຄ່າ 2,000,000,000 ກີບ.

16 ໜີ້ຕ້ອງຮັບຈາກການເຊົ່າຊໍ

ກຸ່ມບໍລິສັດໄດ້ເຊັນສັນຍາເຊົ່າຊື້ສິນເຊື່ອລົດ 2 ຄັນ ເປັນເງິນບາດ ແລະ ເງິນກີບ.

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025, ກຸ່ມບໍລິສັດບໍ່ມີການເຊົ່າຊື້ເພີ່ມ ແລະ ບໍ່ມີການຊຳລະເງິນຕົ້ນພາຍໃຕ້ສັນຍາດັ່ງກ່າວ.

17 ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ກຸ່ມບໍລິສັດ ມີພັນທະໃນການຊຳລະອາກອນກຳໄລ ໃນຮູບແບບຂອງອາກອນ ກຳໄລໃນອັດຕາ ແມ່ນ 20% ຂອງກຳໄລທາງອາກອນ. ນອກຈາກນີ້, ບໍ່ກຸ່ມບໍລິສັດຈົດທະບຽນໃນຕະຫລາດຫຼັກຊັບລາວ ເຊິ່ງອີງຕາມ ລະບຽບຂອງຕະຫຼາດຫຼັກຊັບ ກຸ່ມບໍລິສັດຈະໄດ້ຮັບສ່ວນຫຼຸດຕື່ມອີກ 5% ຈາກອັດຕາອາກອນກຳໄລປະຈຳປີ ເປັນເວລາ 4 ປີນັບ ຈາກປີທີ່ບໍລິສັດໄດ້ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງ ສປປລາວ. ອັດຕາດັ່ງກ່າວແມ່ນໃຊ້ ໄດ້ຈົນເຖິງວັນທີ 31 ທັນວາ 2021 ແລະ ອັດຕາ 20% ແມ່ນເລີ່ມນຳໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2022 ເປັນຕົ້ນໄປ.

ລະບຽບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື້ອຍໆ ເຊິ່ງມັນ ບໍ່ຈະແຈ້ງ. ຂັດແຍ່ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັນທີ່ມີຢູ່ໃນໜ່ວຍງານໄລ່ລຽງອາກອນ ແລະ ເຂດອຳນາດສານ. ອາກອນອາດມີການທົບທວນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ ຜູ້ເຊິ່ງສາມາດປັບໃໝ ແລະ ລົງໂທດ.

ປັດໄຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານ ເຊື່ອວ່າ ໄດ້ຈັດຕັ້ງປ ປ່ຽງຢ່ຽງພໍສຳລັບໜີ້ຕ້ອງສິ່ງອາກອນ ຕາມການຕີຄວາມຂອງ ກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

ໄລຍະສຳລັບ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2025 ກຸ່ມບໍລິສັດລາວອາໂກຣເທັກມະຫາຊົນບໍ່ໄດ້ຕັ້ງໜີ້ຕ້ານຈ່າຍອາກອນ ກຳໄລ ເນື່ອງຈາກການຂາດຫຶ້ນຈາກການດຳເນີນງານ.

18 ຂາດທຶນຕໍ່ຮຸ້ນ

ຂາດທຶນພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງຂາດທຶນຕໍ່ຜູ້ຖືຮຸ້ນໂດຍຄິດໄລ່ແບບອັດຕາຖ່ວງນ້ຳໜັກເສລ່ຍຂອງ ຈຳ ນວນຮຸ້ນສາມັນໃນລະຫວ່າງງວດ.

	ທົບທວນຄືນ 30 ມິຖຸນາ 2025	ທົບທວນຄືນ 30 ມິຖຸນາ 2024
ຂາດທຶນສຳລັບຜູ້ຖືຮຸ້ນສາມັນ (ກີບ)	**(4,937,934,392)**	**(2,956,008,317)**
ອັດຕາຫ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ກ້ຽງຫຼ້ອ (ຮຸ້ນ)	100,000,000	100,000,000
ຂາດທຶນພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	(49.38)	(29.56)

19 ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍກຸ່ມບໍລິສັດ ຫຼື ພາຍໃຕ້ການຄວບຄຸມຮ່ວມຂອງກຸ່ມບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບ ບໍລິສັດຍ່ອຍຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນກຸ່ມບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບກຸ່ມບໍລິສັດ, ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງກຸ່ມບໍລິສັດ ແລະ ສະມາຊິກໃກ້ຊິດ ໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2025 ບໍລິສັດລາວອາໂກຣເທັກມະຫາຊົນບໍ່ໄດ້ມີການຊື້ສິນຄ້າ ແລະ ການບໍລິການອື່ນໆ ແລະ ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ສິນຄ້າ/ບໍ່ມີການຈ່າຍພາກສ່ວນທີ່ກ່ຽວຂ້ອງ.

20 ເຫດການທີ່ເກີດຂຶ້ນພາຍຫຼັງ ມື້ລາຍງານ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນຫລັງຈາກວັນທີ ໃນໃບຢັ້ງຢືນ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານ ລາຍງານການເງິນ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2025.